ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການກະຊວງ

ເລກທີ 2637/ຫກ.6

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2023

# ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບອະນຸມັດງົບປະມານ ລົງທຶນຂອງລັດ ປະຈຳປີ 2023: ໂຄງການພັດທະນາ ລະບົບຊ່ວຍເຫຼືອການຄຸ້ມຄອງລະບົບ (G-Helpdesk) ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທີ່ເໝາະສົມ ທີ່ດຳເນີນກິດຈະການດ້ານການພັດທະນາລະບົບ, ໂດຍສະເພາະທີ່ກ່ຽວກັບ ລະບົບຊ່ວຍເຫຼືອການຄຸ້ມຄອງລະບົບ (G-Helpdesk), ເຂົ້າຮ່ວມປະມູນ. ກຳນົດມອບຮັບສິນຄ້າ 21ວັນ ພາຍຫຼັງເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນນະວຸດທີ່ເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງລະບົບຊ່ວຍເຫຼືອການຄຸ້ມຄອງລະບົບ (G-Helpdesk);
4. ບໍລິສັດໃດ ທີ່ຕ້ອງການເຂົ້າຮ່ວມປະມູນ ແມ່ນສາມາດຊື້ເອກະສານປະມູນຄົບຊຸດເປັນພາສາລາວໄດ້ທີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຕັ້ງຢູ່ເຂດ: ຮົ້ວ ຫສນຍ, ບ້ານ: ສີສະຫວາດ ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທຕິດຕໍ່: 021-316600, 020 77713606, ເລີ່ມຂາຍຊອງແຕ່ວັນທີ 17 ຕຸລາ 2023 ເຖິງວັນທີ 07 ພະຈິກ 2023 (ໃນໂມງລັດຖະການ), ໃນລາຄາ 1,500,000 ກີບຕໍ່ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ 07 ພະຈິກ 2023 ທີ່ຫ້ອງການກະຊວງ ຕສ, ຫ້ອງປະຊຸມຊັ້ນ 02 ຕຶກກະຊວງ ຕສ, ສີສະເກດ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ແມ່ນຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 15:00 ໂມງ ຂອງ ວັນທີ 07 ພະຈິກ 2023 ໂດຍຊ້ອງໜ້າຄະນະກຳມະການການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ເຊັກ (ວີຊາ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ;

ຮຈ ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ອະລະໄຊ ດາລາລອຍ